# ຖ້າທ່ານມີການຕິດເຊື້ອປອດແຫ້ງ (TB) (ພະຍາດປອດແຫ້ງ (TB) ຊະນິດໜຶ່ງ)

You have TB infection (a type of TB)

ອັນນີ້ໝາຍຄວາມວ່າ ທ່ານມີເຊື້ອພະຍາດປອດແຫ້ງ (TB) ຢູ່ໃນຮ່າງກາຍຂອງທ່ານ, ແຕ່ທ່ານບໍ່ທັນ ຮູ້ສຶກວ່າບໍ່ສະບາຍ. ທ່ານບໍ່ສາມາດໃຫ້ການຕິດເຊື້ອກັບຄອບຄົວຂອງທ່ານ ຫຼື ຄົນອື່ນໆໄດ້.

This means you have TB germs in your body, but you don't feel sick. You can't give TB infection to your family or other people.

## ມີຄວາມສຳຄັນຫຼາຍທີ່ຕ້ອງໄດ້ກິນຢາຮັກສາການຕິດເຊື້ອປອດແຫ້ງ (TB) ແຕ່ດຽວນີ້.

It is important to take medicine for TB infection now.



ມີການຕິດເຊື້ອປອດແຫ້ງ (TB)

Has TB infection



ກິນຢາຮັກສາພະຍາດປອດແຫ້ງ (TB)

Takes TB medicine



ກິນຢາຮັກສາພະຍາດປອດແຫ້ງ (TB), ທ່ານສາມາດປ້ອງກັນການຕິດເຊື້ອ ປອດແຫ້ງ (TB) ແລະ ຮັກສາຄອບຄົວຂອງທ່ານໃຫ້ປອດໄພໄດ້!

By taking your TB medicine, you can prevent TB disease and keep your family healthy!

# ເປັນຫຍັງຈິ່ງຕ້ອງກິນຢາຮັກສາພະຍາດປອດ ແຫ້ງ (TB) ແຕ່ດຽວນີ້?

Why take TB medicine now?

## ການຕິດເຊື້ອປອດແຫ້ງ (TB) ສາມາດກາຍໄປເປັນພະຍາດປອດແຫ້ງໄດ້.

TB infection can turn into TB disease.

ພະຍາດປອດແຫ້ງ (TB) ສາມາດເຮັດໃຫ້ຮ່າງກາຍສ່ວນຕ່າງໆເຈັບປວດ, ແຕ່ປົກກະຕິແມ່ນມັນຈະເຮັດໃຫ້ເຈັບປອດ. ເມື່ອຄົນເຮົາເປັນພະຍາດປອດແຫ້ງ (TB), ປົກກະຕິແມ່ນຈະຮູ້ສຶກບໍ່ສະບາຍ.

TB disease can hurt any part of the body, but it usually hurts the lungs. When people have TB disease, they usually feel sick.

ຖ້າທ່ານບໍ່ສະບາຍຈາກພະຍາດປອດແຫ້ງ (TB), ທ່ານອາດຈະ:

If you become sick with TB disease, you might:



ມີໄຂ້
Have fever



ນ້ຳໜັກຫຼຸດ
Lose weight



ໄອ
Cough



ຮູ້ສຶກເມື່ອຍ
Feel tired



ເຫື່ອອອກຕອນກາງຄືນ
Sweat at night

## ຖ້າທ່ານບໍ່ສະບາຍຈາກພະຍາດປອດແຫ້ງ (TB), ທ່ານຍັງສາມາດແຜ່ເຊື້ອ ພຍາດປອດແຫ້ງໄປຕິດໃສ່ຄອບຄົວ ແລະ ຄົນອື່ນໆໄດ້.

If you become sick with TB disease, you can also give TB to your family or other people.

This material was developed by the Massachusetts Department of Public Health. Language: Laotian. December 2014.
For more information, visit www.mass.gov/dph/cdc/tb